Washington State Department of Social & Health Services

# ໃບແຈ້ງການເຖິງພໍ່ແມ່
## NOTICE TO PARENTS

| ວັນທີ |
|---|
| |

ຟອມໃບນີ້ໄດ້ຖືກໃຊ້ໂດຍອີງຕາມ WAC 388-454-0025. ກົມຈະແຈ້ງບອກພໍ່ແມ່ຂອງເດັກນ້ອຍເມື່ອເວລາພວກເຮົາອະນຸມັດເງິນຊ່ວຍເຫລືອ ແລະ ເດັກນ້ອຍອາສັຍຢູ່ນຳຄົນໃດຄົນນຶ່ງນອກຈາກພໍ່ແມ່ຂອງເຂົາເຈົ້າ.

| ຫ້ອງການບໍຣິການຊຸມນຸມຊົນ (CSO) | ບຸກຄົນສຳລັບຕິດຕໍ່ຂອງ CSO | ໂທຣະສັບ |
|---|---|---|
| | | |

ກົມສັງຄົມ ແລະ ສົງເຄາະ (DSHS) ຂອງຣັດວໍຊິງຕັນໄດ້ອະນຸມັດໃນໝໍ່ໆມານີ້ ເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF) ໃຫ້ລູກຂອງທ່ານຜູ້ທີ່ຖືກບົ່ງຊື່ຢູ່ຂ້າງລຸ່ມນີ້:

____________________ ____________________

____________________ ____________________

____________________ ____________________

ກົດໝາຍຂອງຣັດເອົາສິດທິໃຫ້ທ່ານທີ່ຈະຖືກແຈ້ງບອກໂດຍກົມ:

1. ວ່າລູກຂອງທ່ານໄດ້ຖືກອະນຸມັດສຳລັບເງິນຊ່ວຍເຫລືອ TANF (ເງິນ ແລະ ການຄຸ້ມກັນພະຍາບານ) ພາຍໃນເຈັດວັນຂອງວັນທີທີ່ພວກເຮົາອະນຸມັດຄຳງຂໍຂອຮ້ອງຂໍຂອງລູກຂອງທ່ານ, ນອກຈາກວ່າຈະມີການຫວງທີ່ຖືກເຮັດຂຶ້ນມາວ່າທ່ານໄດ້ຂົ່ມເຫັງທຳຮ້າຍ ຫລື ປ່ອຍປະລະເລີຍລູກຂອງທ່ານ.

2. ກ່ຽວກັບທີ່ຢູ່ຂອງລູກທ່ານພາຍໃຕ້ສະພາບການດັ່ງຕໍ່ລົງໄປນີ້:
   - a. ເມື່ອເວລາທ່ານເອົາໃບອັດສຳເນົາຂອງຄຳສັ່ງຈາກສານທີ່ອະນຸມັດໃຫ້ທ່ານດ້ວຍການຄຸ້ມຄອງຕາມກົດໝາຍ, ສິດທິໃນການຢ້ຽມຢາມ ຫລື ເວລາຢູ່ເຮືອນນຳ ແລະ ສົ່ງໃບແຈ້ງການທີ່ຖືກສາບານໃສ່ວ່າໃບຄຳສັ່ງໄດ້ຖືກດັດແປງແລ້ວ; ແລະ
   - b. ບໍ່ມີຄຳສັ່ງຈາກສານໃບໃດທີ່ກີດກັ້ນ ຫລື ຈຳກັດສິດທິຂອງທ່ານທີ່ຈະຕິດຕໍ່ ຫລື ຢ້ຽມຢາມລູກຂອງທ່ານ ຫລື ຜູ້ປົກຄອງເດັກນ້ອຍໂດຍການວາງເງື່ອນໄຂທີ່ຈະປ້ອງກັນເດັກນ້ອຍ ຫລື ຜູ້ປົກຄອງຈາກອັນຕຣາຍ; ແລະ
   - c. ກົມບໍ່ໄດ້ພົບວ່າຜູ້ປົກຄອງມີເຫດຜົນດີສຳລັບການປະຕິເສດທີ່ຈະຮ່ວມມືນຳການດຳເນີນການເກັບເອົາເງິນລ້ຽງລູກຊຶ່ງກ່ຽວຂ້ອງກັບຄວາມຮັບຜິດຊອບຈ່າຍເງິນລ້ຽງລູກຂອງທ່ານ; ແລະ
   - d. ທ່ານບໍ່ໄດ້ກ່ຽວພັນນຳການຫວງທີ່ຖືກເຮັດຂຶ້ນມາ ຫລື ການສືບສວນທີ່ກຳລັງດຳເນີນຢູ່ຊຶ່ງກ່ຽວຂ້ອງນຳການຂົ່ມເຫັງ ຫລື ການປ່ອຍປະລະເລີຍໃນລູກຂອງທ່ານ; ແລະ
   - e. ບໍ່ມີການຟ້ອງຂຶ້ນສານແນວໃດທີ່ກຳລັງດຳເນີນຢູ່ຕາມທີ່ຖືກບົ່ງຢູ່ໃນພາກສ່ວນນ້ອຍ (2)(a) ຮອດ (d).

ທ່ານຈະຂໍເອົາທີ່ຢູ່ ແລະ ສະຖານທີ່ຂອງເດັກນ້ອຍໄດ້:

1. ໂດຍຕົນເອງ, ໂດຍສເນີບັດປະຈຳຕົວທີ່ມີຮູບຕິດນຳ, ຢູ່ທີ່ຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນ;
2. ໂດຍຜ່ານທະນາຍຄວາມ; ຫລື
3. ໂດຍການສົ່ງໃບຮ້ອງຂໍທີ່ຖືກຕີກາປັ້ງປືນລາຍເຊັນໃສ່ ເມື່ອເວລາທ່ານອາສັຍຢູ່ນອກຣັດວໍຊິງຕັນ.

ກ່ອນທີ່ຈະເອົາທີ່ຢູ່ໃຫ້ທ່ານ, ກົມຈະບອກຜູ້ປົກຄອງຜູ້ທີ່ມີເດັກນ້ອຍຢູ່ນຳກ່ຽວກັບຄຳຮ້ອງຂໍໃຫ້ເປີດເຜີຍຂອງທ່ານ. ແລ້ວຜູ້ປົກຄອງມີເວລາ 30 ວັນທີ່ຈະ:

1. ສເນີຣາຍລະອຽດຊຶ່ງຈະຢຸດປັ້ງກົມທີ່ຈະເອົາທີ່ຢູ່ໃຫ້ທ່ານ, ຫລືວ່າ ຈຳກັດສິດທິຂອງທ່ານທີ່ຈະຢ້ຽມຢາມ ຫລື ຕິດຕໍ່ຫາລູກຂອງທ່ານ.

2. ຮ້ອງຂໍເອົາການຟັງຄະດີ. ອັຍຍະການສານອຳນາດການປົກຄອງແລ້ວຈະຕັດສິນວ່າກົມສາມາດເອົາທີ່ຢູ່ໃຫ້ທ່ານໄດ້ຫລືບໍ່.

ກົມ DSHS ຈະຕອບຄຳຮ້ອງຂໍຂອງທ່ານພາຍໃນ 35 ວັນ.

ການບໍຣິການເຕົ້າໂຮມຄອບຄົວ (FRS) ມີໄວ້ໃຫ້ໂດຍຜ່ານ ກົມສັງຄົມ ແລະ ສົງເຄາະ. ການບໍຣິການອັນນີ້ໄດ້ຖືກອອກແບບມາເພື່ອຈະເຮັດໃຫ້ຄອບຄົວແຂງແກ່ງໝັ້ນຄົງ ແລະ ເຕົ້າໂຮມຄອບຄົວ. ກະຣຸນາໂທຣະສັບມາຫາສາຍດ່ວນ FRS/Runaway Youth Information Hotline ໄດ້ທີ່ເລກ 1-800-486-9612 ເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບການບໍຣິການເຫລົ່ານີ້.